## Special Economic Zone,

**Lecture one:** General knowledge about special economic zones (SEZ).

### 1. ຄວາມຮູ້ທົ່ວໄປກ່ຽວກັບເຂດເສດຖະກິດພິເສດ.

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ " ຂສພ" ຂຽນເປັນພາສາອັງກິດ Special Economic Zone "SEZ" ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນ ທີ່ນໍາໃຊ້ເຕັກໂນໂລຊີສູງ, ນໍາໃຊ້ນະວັດຕະກໍາ ໃນການຜະລິດກະສິກໍາເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທໍາມະຊາດ ແລະ ພະລັງງານ ເພື່ອພັດທະນາແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດອາດປະກອບມີ ນິຄົມອຸດສະຫະກໍາ, ເຂດພັດທະນາກະສິກໍາ, ອຸດສະຫະກໍາປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການ, ການຄ້າ ແລະ ການທ່ອງທ່ຽວ[1].

ເຂດເສດຖະກິດພິເສດ ແມ່ນພື້ນທີ່ ຫຼື ເຂດທີ່ຖືກກໍານົດ ແລະ ສ້າງຂຶ້ນເປັນການສະເພາະ ເພື່ອສົ່ງເສີມ, ສະໜັບ ສະໜູນ, ອໍານວຍຄວາມສະດວກລວມທັງການໃຫ້ສິດພິເສດໃນການດໍາ ເນີນທຸລະກິດ.

ເຂດເສດຖະກິດພິເສດ ເປັນເຂດທີ່ມີດໍາລັດ ຫຼື ກົດໝາຍບັງຄັບແຕກຕ່າງກັບເຂດອື່ນ ເພື່ອຕ້ອງການໃຫ້ພື້ນທີ່ດັ່ງກ່າວມີການພັດທະນາໄວຂຶ້ນຕາມຈຸດປະສົງທີ່ໄດ້ກໍານົດໄວ້.

ເຂດເສດຖະກິດພິເສດ ແມ່ນ ເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນທີ່ນໍາໃຊ້ເຕັກໂນໂລຊີສູງ, ນໍາໃຊ້ນະວັດຕະກໍາ ໃນການຜະລິດກະສິກໍາເປັນສິນຄ້າ, ການຜະລິດທີສະອາດ, ປະຢັດຊັບພະຍາກອນທໍາມະຊາດ ປລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ.

ຢູ່ ສປປ ລາວ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນສະບັບເລກທີ 02/ສພຊ, ກໍານົດໄວ້ວ່າ: ເຂດເສດຖະກິດພິເສດໝາຍເຖິງ: ເຂດທີ່ລັດຖະບານກໍານົດ ເພື່ອພັດທະນາໃຫ້ເປັນຕົວເມືອງໃໝ່ ທີ່ທັນສະໄໝຮອບດ້ານ, ເປັນບ່ອນດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ຊຶ່ງມີເນື້ອທີ່ແຕ່ 1.000 ເຮັກຕາຂຶ້ນໄປ, ມີນະໂຍບາຍ ສົ່ງເສີມພິເສດ ແລະ ມີລະບົບເສດຖະກິດ - ການເງິນເປັນເຈົ້າຕົນເອງ, ເປັນຫົວໜ່ວຍບໍລິຫານນ້ອຍ - ສັງຄົມກວ້າງ, ມີຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດເປັນຜູ້ຄຸ້ມຄອງ. ເຂດເສດຖະກິດພິເສດອາດຈະປະກອບດ້ວຍຫຼາຍເຂດເສດຖະກິດສະເພາະ, ຖ້າມີປະຊາຊົນດໍາລົງຊີວິດ ຢູ່ໃນເຂດ ບໍ່ຈໍາເປັນຍົກຍ້າຍອອກຈາກ ເຂດ, ກົງກັນຂ້າມຈະຖືກຈັດສັນ ແລະ ແບ່ງງານໃຫ້ມີສ່ວນຮ່ວມກັບເຂດເພື່ອພ້ອມກັນພັດທະນາ ແລະ ມີລາຍໄດ້ໝັ້ນຄົງ, ມີລະບົບຮັບປະກັນຄວາມສະຫງົບປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ.

ເຂດເສດຖະກິດພິເສດ ແມ່ນພື້ນທີ ຫຼື ຂົງເຂດໃດໜຶ່ງ, ຊຶ່ງເຂດດັ່ງກ່າວນັ້ນແມ່ນເຂດທີມີ ລະບຽບການຄຸ້ມຄອງທາງດ້ານເສດຖະກິດແຕກຕ່າງກັບເຂດອື່ນ ທີຢູ່ໃນປະເທດນັ້ນ. ຊຶ່ງລະບຽບທີນໍາໃຊ້ໃນການຄຸ້ມຄອງເຂດດັ່ງກ່າວນັ້ນຈະມີແນວໂນ້ມໃນການອໍານວຍຄວາມສະດວກ, ສ້າງແຮງຈູງໃຈເພື່ອດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (foreign direct investment) ເປັນການກະຕຸ້ນໃຫ້ມີການລົງທຶນຂອງບຸກຄົນ ຫຼື ນິຕິບຸກຄົນພາຍໃນປະເທດຫຼາຍຂຶ້ນ.

ການກໍານົດໃຫ້ມີການສ້າງຕັ້ງເຂດເສດຖະກິດພິເສດຂອງປະເທດໃດໜຶ່ງນັ້ນ, ຜູ້ທີ່ລົງທຶນ ຫຼືດໍາເນີນກິດຈະການໃນເຂດດັ່ງກ່າວນັ້ນຈະໄດ້ຮັບນະໂຍບາຍພິເສດ ຫຼື ຜົນປະໂຫຍດເພີ່ມເຕີມໃນເຂດດັ່ງກ່າວ, ໃນນີ້ຈະລວມທັງການຫຼຸດຜ່ອນອາກອນ ແລະ ການຈ່າຍພາສີໃນອັດຕາທີຕໍ່າ.

---

[1] ມາດຕາ 2 ຂອງດໍາລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 118/ ລບ, ລົງວັນທີ 07.06.2018, ໜ້າທີ 1

ສິ່ງທີ່ຄວນເອົາໃຈໃສ່:

- ເຂດເສດຖະກິດພິເສດແມ່ນເຂດທີ່ກຳນົດໃຫ້ເປັນເຂດທີ່ມີລະບຽບຫຼັກການໃນການຄຸ້ມຄອງຕ່າງຈາກເຂດອື່ນໃນປະເທດນັ້ນ;
- ລະບຽບຄຸ້ມຄອງທາງດ້ານເສດຖະກິດມີແນວໂນ້ມໃນການເອື້ອອຳນວຍ ແລະ ດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ;
- ເຂດເສດຖະກິດພິເສດ ເປັນເຂດທີ່ຖືກສ້າງຂຶ້ນມາເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນຂອງຕ່າງປະເທດ, ເພື່ອເປັນການກະຕຸ້ນໃຫ້ມີການເຕີບໂຕທາງດ້ານເສດຖະກິດ ແລະ ເປັນເຂດທີ່ນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີທີ່ທັນສະໄໝ;
- ໃນຂະນະດຽວກັນມີຫຼາຍປະເທດໄດ້ມີການສ້າງຕັ້ງ ເຂດເສດຖະກິດພິເສດ, ຊຶ່ງໃນນັ້ນ ສປປຈີນ ເປັນປະເທດໜຶ່ງທີ່ໄດ້ຮັບຄວາມປະສົບຜົນສຳເລັດສູງ ໃນການນຳໃຊ້ເຂດດັ່ງກ່າວເພື່ອດຶງດູງເງິນລົງທຶນຂອງຕ່າງປະເທດ.2

ໂດຍປົກກະຕິແລ້ວ, ການສ້າງຕັ້ງເຂດເສດຖະກິດພິເສດ ແມ່ນເພື່ອເລັ່ງການເຕີບໂຕທາງດ້ານເສດຖະກິດໃນຂົງເຂດຫຼື ເຂດແຄ້ວນໃດໜຶ່ງ. ຄວາມສຳເລັດຂອງການເຕີບໂຕຂອງເສດຖະກິດໃນຮູບແບບນີ້ແມ່ນມີຜົນມາຈາກ ສິ່ງຈູງໃຈທາງດ້ານພາສີ, ຊຶ່ງການຫຼຸດຜ່ອນພາສີ ເປັນວິທີການໜຶ່ງທີ່ດຶງດູດການລົງທຶນຂອງຕ່າງປະເທດ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຊີ.

ການສ້າງເຂດດັ່ງກ່າວນີ້, ຈະເຮັດໃຫ້ການສົ່ງອອກສິນຄ້າລະຫວ່າງປະເທດເພີ່ມຂຶ້ນ. ແນວໃດກໍຕາມ, ຍັງມີຄວາມສ່ຽງທີ່ປະເທດນັ້ນຈະເມີດລະບົບ ຂອງການຈັດເກັບພາສີ ແລະ ນຳໃຊ້ເຂດດັ່ງກ່າວເພື່ອຂັດຂວາງການຈັດເກັບພາສີ. ເຂດເສດຖະກິດພິເສດ ຈະນຳໄປສູ່ລະບົບລາດຊະການ ເນື່ອງຈາກວ່າເຂດດັ່ງກ່າວໄດ້ມີລະບຽບທີ່ຄຸ້ມຄອງສະເພາະ, ຊຶ່ງເປັນສາເຫດເຮັດໃຫ້ການຮົ່ວໄຫຼຂອງເງິນຕາອອກຈາກລະບົບ ແລະ ເຮັດໃຫ້ປະສິດທິພາບຂອງລະບົບເງິນຕາຫຼຸດລົງ.

ໃນຂະນະດຽວກັນ ກໍ່ເປັນປະເດັນທີ່ຍົກຂຶ້ນມາຖົກຖຽງ ກ່ຽວກັບຜົນປະໂຫຍດໃນການນຳໃຊ້ລະບົບກົນໄກຂອງຂດດັ່ງກ່າວ ຂອງ ພາກທຸລະກິດ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນກິດຈະການຢູ່ພາຍໃນເຂດ, ລວມທັງເສດຖະກິດມະຫາພາກ, ເສດຖະກິດສັງຄົມ.

**ສັງລວມແລ້ວ:**

ເຂດເສດຖະກິດພິເສດ ແມ່ນເຂດພັດທະນາເສດຖະກິດໃໝ່ ຊຶ່ງລັດຖະບານກຳນົດໃຫ້ເປັນເຂດທີ່ມີທີ່ຕັ້ງ, ມີສະພາບແວດລ້ອມທາງດ້ານເສດຖະກິດ ສາມາດອຳນວຍຄວາມສະດວກ ແລະ ເປັນເອກະລາດໃນການດຳເນີນທຸລະກິດຫຼາຍກວ່າເຂດອື່ນໃນຂອບເຂດທົ່ວປະເທດ, ໂດຍສ້າງໃຫ້ມີພື້ນຖານໂຄງລ່າງດ້ານເສດຖະ ກິດ-ສັງຄົມ, ສະຖາບັນ ແລະ ອື່ນໆທີ່ຄົບຊຸດ ເພື່ອຍົກສູງຄວາມສາມາດແຂ່ງຂັນ ໃນການດຳເນີນທຸລະກິດ ຊຶ່ງຈະ ເປັນສິ່ງດຶງດູດຈິດໃຈໃຫ້ແກ່ການລົງທຶນ ຂອງທຸກພາກສ່ວນເຂົ້າໃນການພັດທະນາເສດຖະກິດເຂດດັ່ງກ່າວ ໄວກວ່າເຂດອື່ນ. ເຂດເສດຖະກິດພິເສດໄດ້ຮັບນະໂຍບາຍສົ່ງເສີມພິເສດ, ມີລະບົບເສດຖະກິດ-ການເງິນ ເປັນເຈົ້າຕົນເອງ, ເປັນລະບົບການຄຸ້ມຄອງບໍລິຫານຕາມກົນໄກຫົວໜ່ວຍບໍລິຫານນ້ອຍ-ສັງຄົມກ້ວາງ, ມີຄະນະບໍລິຫານ ແລະ ສະພາບໍລິຫານ

---

2 https://www.investopedia.com/terms/s/sez.asp

ເສດຖະກິດ ເປັນຜູ້ຄຸ້ມຄອງ, ມີລະບົບຮັບປະກັນຄວາມສະຫງົບປອດໄພ ແລະ ປົກປັກຮັກສາວັດທະນະທຳອັນດີງາມ ຂອງຊາດ, ອະນຸລັກສິ່ງແວດລ້ອມໃຫ້ຍືນຍົງ, ມີເນື້ອທີ່ແຕ່ໜຶ່ງພັນເຮັກຕາຂຶ້ນໄປ, ອາດຈະ ປະກອບດ້ວຍຫລາຍເຂດ ເສດຖະກິດສະເພາະ ແລະ ຖ້າມີປະຊາຊົນ ດຳລົງຊີວິດຢູ່ໃນເຂດ ແມ່ນບໍ່ຈຳເປັນຍົກຍ້າຍອອກຈາກເຂດເສດຖະກິດ ພິເສດ. ກົງກັນຂ້າມຈະຖືກຈັດສັນ ແລະ ແບ່ງງານໃຫ້ມີສ່ວນຮ່ວມກັບເຂດ ພ້ອມກັບພັດທະນາ ແລະ ມີລາຍໄດ້ຢ່າງ ໝັ້ນຄົງ.

2. **ຄວາມໝາຍຂອງເຂດເສດຖະກິດພິເສດ ແລະ ເສດຖະກິດສະເພາະ.**

ເຂດເສດຖະກິດພິເສດ ແມ່ນເຂດທີ່ລັດຖະບານກຳນົດໃຫ້ເປັນເຂດພັດທະນາໃຫ້ເປັນຕົວເມືອງໃໝ່ທີ່ທັນສະ ໄໝ ຮອບດ້ານ, ເປັນເຂດທີນຳໃຊ້ນະວັດຕະກຳ, ເຕັກໂນໂລຊີທີທັນສະໄໝ ແລະ ນຳໃຊ້ທຶນຮອນຈຳນວນຫຼາຍໃນ ການພັດທະນາ ແລະ ມີເນື້ອທີ ແຕ່ 1000 ແຮັກຕາ ຂຶ້ນໄປ.ຖ້າມີປະຊົນດຳລົງຊີວິດຢູ່ເຂດດັ່ງກ່າວກໍ່ບໍ່ຈຳເປັນ ຍົກຍ້າຍອອກ, ກົງກັນຂ້າມແມ່ນຈະໃຫ້ປະຊົນດຳລົງຊີວິດຢູ່ໃນເຂດນັ້ນໄດ້ມີສ່ວນຮ່ວມໃນການພັດທະນາເຂດ ດັ່ງກ່າວ.

ໃນ ສປປລາວ ລັດຖະບານໄດ້ກຳນົດຮູບການການພັດທະນາອອກເປັນ ສອງຮູບແບບຄື ເຂດເສດຖະກິດ ພິເສດ ແລະ ເຂດເສດຖະກິດສະເພາະ. ຊຶ່ງໃນນີ້ເຂດເສດຖະກິດສະເພາະໝາຍເຖິງ ເຂດທີ່ລັດຖະບານກຳນົດໃຫ້ເປັນ ເຂດອຸດສາຫະກຳ, ເຂດການຜະລິດເພື່ອສົ່ງອອກ, ເຂດຕົວເມືອງທ່ອງທ່ຽວ, ເຂດການຄ້າປອດພາສີ, ເຂດພັດທະນາ ເຕັກໂນໂລຊີ ແລະ ຂໍ້ມູນ - ຂ່າວ ສານ, ເຂດເສດຖະກິດຊາຍແດນ ແລະ ອື່ນໆ.

ການຕັ້ງຊື່ເຂດເສດຖະກິດສະເພາະແມ່ນອີງໃສ່ລັກສະນະຂອງແຕ່ລະເຂດ, ການພັດທະນາ, ການຜະລິດ ແລະ ການບໍລິການທີ່ມີຄວາມແຕກຕ່າງກັນໄປ. ມີສະພາບໍລິຫານເສດຖະກິດ ເປັນຜູ້ບໍລິຫານ ແລະ ຄຸ້ມຄອງຕາມກົນໄກ ຕາປະທັບດຽວ, ມີການກຳນົດເຂດແດນຢ່າງຈະແຈ້ງ ແລະ ບໍ່ມີປະຊາຊົນດຳລົງຊີວິດຢູ່ໃນເຂດດັ່ງກ່າວ.

**ສັງລວມແລ້ວ:**

ເຂດເສດຖະກິດສະເພາະ ແມ່ນເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດທີ່ມີທີ່ຕັ້ງ, ມີສະພາບແວດລ້ອມດ້ານ ເສດຖະກິດ ສາມາດອຳນວຍຄວາມສະດວກ ແລະ ເປັນເອກະລາດ ໃນການດຳເນີນທຸລະກິດຫຼາຍກວ່າເຂດອື່ນ ໃນ ຂອບເຂດທົ່ວປະເທດ, ໂດຍສ້າງໃຫ້ມີພື້ນຖານໂຄງລ່າງ ດ້ານເສດຖະກິດ - ສັງຄົມ, ສະຖາບັນ ແລະ ອື່ນໆທີ່ຄົບຊຸດ ເພື່ອຍົກສູງຄວາມສາມາດແຂ່ງຂັນ ໃນການດຳເນີນທຸລະກິດ ຊຶ່ງຈະເປັນສິ່ງດຶງດູດຈິດໃຈໃຫ້ແກ່ການລົງທຶນຂອງທຸກ ພາກສ່ວນ ເຂົ້າໃນການພັດທະນາເຂດດັ່ງກ່າວ ເພື່ອໃຫ້ມີການພັດທະນາເສດຖະ ກິດໄວກວ່າເຂດອື່ນ. ການຕັ້ງຊື່ຂອງ ເຂດເສດຖະກິດສະເພາະ ແມ່ນອີງໃສ່ຄຸນລັກສະນະສະເພາະ ຂອງແຕ່ລະເຂດໃດໜຶ່ງ ທີ່ເໝາະສົມຕາມຄຸນລັກສະນະ ຂອງ ພື້ນຖານໂຄງລ່າງ ແລະ ສະຖາບັນ ທີ່ເອື້ອອຳນວຍໃນການດຳເນີນທຸລະກິດ, ການຜະລິດ ແລະ ການບໍລິການ ທີ່ ມີຄວາມແຕກຕ່າງກັນໄປ ຕາມຄຸນລັກສະນະສະເພາະ ຂອງແຕ່ລະປະເພດ ທີ່ຕ້ອງການພັດທະນາ. ເຂດເສດຖະກິດ ສະເພາະ ໄດ້ຮັບນະໂຍບາຍສົ່ງເສີມສະເພາະ, ມີລະບົບເສດຖະກິດ-ການເງິນ ເປັນເຈົ້າຕົນເອງ, ມີສະພາບໍລິຫານ ເສດຖະກິດເປັນຜູ້ບໍລິຫານ ແລະ ຄຸ້ມຄອງ ຕາມກົນໄກຕາປະທັບດຽວ ແລະ ມີຫົວໜ່ວຍການດຳເນີນທຸລະກິດການ ຜະລິດ, ການຄ້າ ແລະ ການບໍລິການຈຳນວນໜຶ່ງ ຊຶ່ງມີການກຳນົດເຂດແດນຢ່າງຈະແຈ້ງ ແລະ ບໍ່ມີປະຊາຊົນດຳລົງ ຊີວິດຢູ່ໃນເຂດດັ່ງກ່າວ.

ບາງຄຳສັບທີນຳໃຊ້ໃນດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະມີດັ່ງນີ້:

- **ຜູ້ພັດທະນາ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງຂອງລັດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ລົງທຶນພັດທະນາພື້ນທີ່ໃດໜຶ່ງເປັນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ

ເປັນຕົ້ນການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກ ເພື່ອອຳນວຍຄວາມສະດວກໃນການດຳເນີນທຸລະກິດ, ຜະລິດ ແລະ ບໍລິການ;

- **ຜູ້ລົງທຶນ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງລັດ ທີ່ຈົດທະບຽນດຳເນີນທຸລະກິດ ຢູ່ ຂພສ;
- **ຫົວໜ່ວຍທຸລະກິດ** ແມ່ນການຜະລິດ, ການຄ້າ ແລະ ການບໍລິການ ໃນເຂດເສດຖະກິດສະເພາະ ໝາຍເຖິງຜູ້ລົງທຶນ ທີ່ໄດ້ຈົດທະບຽນກັບສະພາບໍລິຫານເສດຖະກິດ ຢ່າງຖືກຕ້ອງຕາມລະບຽບການຂອງເຂດ;
- **ກິດຈະການການຜະລິດ** ໝາຍເຖິງການຜະລິດ, ການປຸງແຕ່ງ, ການປະກອບ, ການແປຮູບ, ການປ່ຽນແປງສະພາບວັດຖຸດິບ ຫຼື ວັດຖຸສິ່ງຂອງ ອອກເປັນຜະລິດຕະພັນອັນໃໝ່ ເຊັ່ນ: ໂຮງງານເຟີນີເຈີ, ໂຮງງານປະກອບຍານພາຫະນະ, ໂຮງງານປະກອບສິ້ນສ່ວນເອເລັກໂຕຣນິກ ແລະ ການຜະລິດອື່ນໆ;
- **ກິດຈະການການຄ້າ** ໝາຍເຖິງການໃຊ້ວັດຖຸ, ສິນຄ້າ ແລະ ຜະລິດຕະພັນຕ່າງໆ ນຳອອກຂາຍຕາມສະພາບເດີມໂດຍບໍ່ໄດ້ມີການປຸງແຕ່ງ ຫຼື ອາດຈະມີພຽງການຫຸ້ມຫໍ່, ດັດແປງພຽງເລັກນ້ອຍ ເຊັ່ນ: ກິດຈະການ ການຄ້າຂາອອກ-ຂາເຂົ້າ, ການຄ້າຜ່ານແດນ, ຮ້ານຄ້າປອດພາສີ, ການຂາຍຍົກ ແລະ ອື່ນໆ.
- **ກິດຈະການການບໍລິຫານ** ໝາຍເຖິງການສະໜອງແຮງງານ ຫຼື ສໜອງການບໍລິການ ໃຫ້ຜູ້ອື່ນດ້ວຍແຮງງານ, ສະຕິປັນຍາ, ອຸປະກອນເຄື່ອງຈັກ, ພາຫະນະ ແລະ ຊັບສິນຕ່າງໆ ໂດຍໄດ້ຮັບຄ່າບໍລິການເປັນສິ່ງຕອບແທນ ເຊັ່ນ: ກິດຈະການຂົນສົ່ງ, ກິດຈະການລະບົບສາງ, ການກໍ່ສ້າງໂຮງແຮມ, ການທ່ອງທ່ຽວ, ທະນາຄານ, ມະຫາວິທະຍາໄລ, ກິດຈະການສາທາລະນະຕ່າງໆ ຊັ່ນ: ສວນສະໜຸກ, ບໍລິການສະຖານທີທ່ອງທ່ຽວ ແລະ ການບໍລິການອື່ນໆ.
- **ຫົວໜ່ວຍບໍລິຫານນ້ອຍ-ສັງຄົມກ້ວາງ** ໝາຍເຖິງການຄຸ້ມຄອງບໍລິຫານ ຂພສ ດ້ວຍກົນໄກຮັບຜິດຊອບ ເພື່ອໃຫ້ມີປີສິດທິຜົນ, ຮອບດ້ານຕາມຂອບເຂດສິດ ແລະ ໜ້າທີ່ຂອງແຕ່ລະເຂດ ຊຶ່ງມີຕາປະທັບເປັນຂອງຕົນເອງ, ມີສິດນຳໃຊ້ເຂົ້າໃນການພົວພັນ, ປະສານງານ, ຕິກລົງກັບທຸກພາກສ່ວນທັງພາຍໃນ ແລະຕ່າງປະເທດ ຢ່າງກວ້າງຂວາງ.
- **ການພັດທະນາທີ່ຕິດພັນກັບການຮັບປະກັນດ້ານສິ່ງແວດລ້ອມ** ໝາຍເຖິງການພັດທະນາ ຂພສ ທີ່ຮັກສາຄວາມສົມດູນຂອງລະບົບນິເວດວິທະຍາ ແລະ ຊີວະນານາພັນ ຊຶ່ງຜູ້ພັດທະນາ, ຜູ້ລົງທຶນ ຕ້ອງບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ເປັນຕົ້ນຕ້ອງມີ ແຜນການຟື້ນຟູປັວແປງ ສິ່ງແວດລ້ອມໃຫ້ຢູ່ໃນສະພາບທີ່ດີ ທັງຮັບປະກັນບໍ່ໃຫ້ມີຜົນກະທົບໄລຍະຍາວ, ການຈຳກັດສິ່ງເສດເຫຼືອ, ຂີ້ເຫຍື້ອ, ທາດເບື່ອ, ສານພິດ, ເຄມີຕົກຄ້າງຕ່າງໆ, ການປົນເປື້ອນຂອງອາຫານ, ສຽງທີ່ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສຸຂະພາບຂອງຄົນ ແລະ ສັດ;
- **ການຫັນທີ່ດິນເປັນທຶນຂອງຂະແໜງການພັດທະນາ ຂພສ** ໝາຍເຖິງ ການພັດທະນາທີ່ດິນຢ່າງມີຈຸດສຸມ ແລະໃຫ້ທີດິນດັ່ງກ່າວສາມາດກາຍເປັນທຶນ (ການຖືຮຸ້ນ, ການເກັບຄ່າເຊົ່າ ຫຼື ຄ່າສຳປະທານ ແລະ ການເອົາໄປເປັນຫຼັກຊັບຄ້ຳປະກັນ) ເພື່ອພັດທະນາຢ່າງມີປະສິດທິຜົນ;
- **ການພັດທະນາ ຂພສ ໃຫ້ມີປະສິດທິຜົນທາງດ້ານເສດຖະກິດ** ໝາຍເຖິງການໝູນໃຊ້ທ່າແຮງທາງດ້ານຊັບພະຍາກອນທຳມະຊາດຮອບດ້ານ ແລະ ບັນດານະໂຍບາຍສົ່ງເສີມທີ່ລັດຖະບານມອບໃຫ້ ຂພສ ເຂົ້າໃນການວາງແຜນນະໂຍບາຍ ແລະ ຍຸດທະສາດການພັດທະນາຂອງ ສພສ ໃຫ້ເກີດຜົນປະໂຫຍດທາງດ້ານເສດຖະກິດສູງສຸດ;
- **ການພັດທະນາ ຂພສ ໃຫ້ເກີດປະສິດທິຜົນທາງດ້ານສັງຄົມ** ໝາຍເຖິງການຫັນປ່ຽນແບບວິທີການດຳລົງຊີວິດຂອງພົນລະເມືອງໃນ ຂພສ ຕາມມາດຕະຖານບັນລຸເປົ້າໝາຍສະຫັດສະວັດ ເພື່ອການພັດທະນາແບບຍືນຍົງ;

- **ພົນລະເມືອງ** ໝາຍເຖິງ ຄົນທີ່ຖືສັນຊາດລາວ, ພົນລະເມືອງກົດຕີມະສັກ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ແຮງງານ, ຊ່ຽວຊານ ແລະ ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ, ດຳເນີນທຸລະກິດ, ການຜະລິດ ແລະ ການບໍລິການ ຢູ່ພາຍໃນ ຂພສ;
- **ການເຊື່ອມໂຍງເສດເຂດຖະກິດກັບພາກພື້ນ ແລະ ສາກົນ** ໝາຍເຖິງ ການເຊື່ອມຕົວທາງດ້ານເສດຖະກິດ ຢ່າງຮອບດ້ານຂອງ ສພສ ເຂົ້າໃນເຂດເສດຖະກິດ ອາຊຽນ, ພາກພື້ນ ແລະ ສາກົນ;
- **ເຂດທີ່ມີຄວາມສາມາດແຂ່ງຂັນສູງ** ໝາຍເຖິງ ເຂດທີ່ມີການພັດທະນາບັນດາກົນໄກການຄຸ້ມຄອງບໍລິຫານ ແລະ ຄຸ້ມຄອງວິສາຫະກິດຕາມກົນໄກການຕະຫຼາດຢ່າງແທ້ຈິງ.
- **ອຸດສະຫະກຳການຜະລິດ** ໝາຍເຖິງ ການປຸງແຕ່ງດ້ວຍການນຳໃຊ້ເຄື່ອງຈັກ, ເຕັກໂນໂລຊີທັນສະໄໝ ແລະ ແຮງງານຄົນຢູ່ໃນໂຮງງານ ເພື່ອທຳການຜະລິດ, ການແປຮູບວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ຈາກສະພາບເດີມ ໄປສູ່ຜະລິດຕະພັນໃໝ່ເປັນສິນຄ້າ.

## ເອກະສານອ້າງອີງ:


1. ມາດຕາ 2 ຂອງດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 118/ ລບ, ລົງວັນທີ 07.06.2018, ໜ້າທີ 1
2. ເວບໄຊ້ https://www.investopedia.com/terms/s/sez.asp